ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------==000==------------

# ຄໍາແນະນໍາ

# ຂອງສູນກາງແນວລາວສ້າງຊາດ ແລະ ກະຊວງພາຍໃນ ກ່ຽວກັບການແບ່ງຄວາມຮັບຜິດຊອບວຽກງານຊົນເຜົ່າ, ສາສະໜາ ແລະ ການຈັດຕັ້ງທາງສັງຄົມ

- ອີງຕາມມະຕິຕົກລົງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນກາງແນວລາວສ້າງຊາດ ເລກທີ 52 /ຄລສພ, ລົງວັນທີ 30 ມີນາ 2012.

- ອີງຕາມດໍາລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງພາຍໃນ ເລກທີ 253 /ນຍ, ລົງວັນທີ 19 ສິງຫາ 2011. ສູນກາງແນວລາວສ້າງຊາດ ແລະ ກະຊວງພາຍໃນ ໄດ້ຕົກລົງແບ່ງຄວາມຮັບຜິດຊອບຕໍ່ວຽກງານຊົນເຜົ່າ, ສາສະໜາ ແລະ ການຈັດຕັ້ງທາງສັງຄົມໃນສປປ ລາວ ດັ່ງນີ້ :

**I. ແນວລາວສ້າງຊາດ**

**1.1. ວຽກງານຊົນເຜົ່າ**

**1.) ວຽກງານຍຸດທະສາດ ແລະ ແຜນການ**

- ຄົ້ນຄວ້າຫັນແນວທາງ ແລະ ແຜນນະໂຍບາຍຂອງພັກມາເປັນແຜນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການ ເພື່ອສຶກສາອົບຮົມເຕົ້າໂຮມຄວາມສາມັກຄີຊົນເຜົ່າ ນໍາສະເໜີຕໍ່ພັກພິຈາລະນາຮັບຮອງ ແລະ ນໍາໄປສົມທົບແນວລາວສ້າງຊາດຂັ້ນທ້ອງຖິ່ນເຜີຍແຜ່ ແລະ ແນະນໍາຈັດຕັ້ງປະຕິບັດຕົວຈິງ;

- ແນວລາວສ້າງຊາດຂັ້ນທ້ອງຖິ່ນຄົ້ນຄວ້າຫັນແຜນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການຂອງຂັ້ນເທິງ, ມະຕິ ແລະ ທິດຊີ້ນໍາຂອງອົງຄະນະພັກຂັ້ນຂອງຕົນມາເປັນວຽກງານລະອຽດສຶກສາອົບຮົມເຕົ້າໂຮມຄວາມສາມັກຄີຊົນເຜົ່າ ແລ້ວນໍາໄປຈັດຕັ້ງປະຕິບັດຕົວຈິງ;

- ສ້າງ, ປະຕິບັດແຜນການ ແລະ ໂຄງການພັດທະນາວຽກງານຊົນເຜົ່າໃຫ້ມີຄວາມເຂັ້ມແຂງເປັນຕົ້ນແມ່ນ ເຊື່ອມຊຶມແນວທາງ, ແຜນນະໂຍບາຍ, ນະໂຍບາຍ, ພາລະບົດບາດ, ປັບປຸງການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ, ຄົ້ນຄວ້າບາງບັນຫາຂອງຊົນເຜົ່າ, ຝຶກອົບຮົມຍົກລະດັບດ້ານວິຊາການ, ທັດສະນະສຶກສາ, ແລກປ່ຽນບົດຮຽນຢູ່ພາຍໃນ ແລະ ຕ່າງປະເທດ.

**2.) ວຽກງານນິຕິກຳ.**

- ເຂົ້າຮ່ວມໃນການຄົ້ນຄວ້າສ້າງ ແລະ ປັບປຸງລະບຽບ-ກົດຫມາຍກ່ຽວກັບຊົນເຜົ່າ;
- ເຜີຍແຜ່ບັນດານະໂຍບາຍ, ນິຕິກຳ, ສົນທິສັນຍາຕ່າງໆທີ່ພົວພັນເຖິງຊົນເຜົ່າ ແລະ ສິດທິມະນຸດ;

-ສະເຫນີຄຳຄິດເຫັນທີ່ຈຳເປັນຕໍ່ພາກສ່ວນທີ່ກ່ຽວຂ້ອງໃນການສ້າງນະໂຍບາຍ ແລະ ລະບຽບຕ່າງໆ ທີ່ກ່ຽວຂ້ອງກັບຊົນເຜົ່າ.

**3.) ວຽກງານຮ່ວມມືສາກົນ**

- ພົວພັນຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ກ່ຽວກັບການຄົ້ນຄວ້າ, ສຶກສາອົບຮົມ, ໂຄສະນາ, ສົ່ງເສີມ, ກໍ່ສ້າງ, ບຳລຸງ ແລະ ປັບປຸງວຽກງານຊົນເຜົ່າ;
- ເຊັນບົດບັນທຶກຊ່ວຍຈຳ, ເຊັນແຜນການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕາມຂອບເຂດສິດ ແລະ ຫນ້າທີ່ ກໍ່ຄືແນວທາງຂອງພັກ ເພື່ອພັດທະນາວຽກງານຊົນເຜົ່າ;
- ສົມທົບພາກສ່ວນກ່ຽວຂ້ອງ ເພື່ອຕິດຕາມກວດກາ, ຊຸກຍູ້ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການທີ່ຮັບການຊ່ວຍເຫຼືອຈາກຕ່າງປະເທດ ແລະ ບັນດາອົງການຈັດຕັ້ງສາກົນຕໍ່ວຽກງານຊົນເຜົ່າໃຫ້ຖືກຕ້ອງຕາມລະບຽບ-ກົດຫມາຍ ແລະ ມີປະສິດທິຜົນ.

4.**) ວຽກງານຕິດຕາມ ແລະ ຊຸກຍູ້.**

- ເຂົ້າຮ່ວມແນະນຳ, ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ລະບຽບກົດຫມາຍ, ແຜນງານ, ແຜນການ ແລະ ໂຄງການຕ່າງໆກ່ຽວກັບວຽກງານຊົນເຜົ່າຂອງລັດ;
- ເຂົ້າຮ່ວມຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດນະໂຍບາຍກ່ຽວກັບວຽກງານຊົນເຜົ່າ ໂດຍສະເພາະແມ່ນນະໂຍບາຍກ່ຽວກັບພາສາ, ຫນັງສື ແລະ ການອະນຸລັກວັດທະນະທຳທີ່ເປັນເອກະລັກ ແລະ ເປັນມູນເຊື້ອອັນດີງາມຂອງຊາດ ແລະ ຂອງຊົນເຜົ່າ.

5.) **ວຽກງານແກ້ໄຂຂໍ້ຂັດແຍ່ງ ແລະ ຂໍ້ສະເຫນີ.**

- ເກັບກຳສະພາບແນວຄິດ, ຄວາມມຸ່ງມາດປາຖະຫນາ, ຄວາມຂັດຂ້ອງຫມອງໃຈຂອງຊົນເຜົ່າ ເພື່ອຄົ້ນຄວ້າ ແລະ ສະເຫນີໃຫ້ອົງການພັກ ແລະ ລັດທີ່ມີຄວາມຮັບຜິດຊອບພິຈາລະນາ ແລະ ຊີ້ນຳການແກ້ໄຂ;
- ສົມທົບພາກສ່ວນກ່ຽວຂ້ອງ ເພື່ອເຂົ້າຮ່ວມຄົ້ນຄວ້າ, ໄກ່ເກ່ຍຂໍ້ຂັດແຍ່ງດ້ານຕ່າງໆ, ປະກອບສ່ວນແກ້ໄຂສະພາບ ປະກົດການຫຍໍ້ທໍ້ ແລະ ຄຳສະເຫນີຂອງບັນດາຊົນເຜົ່າ, ມີຄຳເຫັນຕໍ່ການຕົກລົງແກ້ໄຂບັນຫາຂອງຊົນເຜົ່າທີ່ເຫັນວ່າບໍ່ແທດເຫມາະກັບຄວາມເປັນຈິງ.

6.) **ວຽກງານສະຖິຕິ ແລະ ຂໍ້ມູນຂ່າວສານ.**

- ສ້າງແຜນການ, ກຳນົດຖານຂໍ້ມູນ, ແບບຟອມສະຖິຕິ ເພື່ອເກັບກຳສະຖິຕິຜູ້ເປັນຄົນທຸງ, ຜູ້ຊົງຄຸນວຸດທິ, ຜູ້ເປັນຫຼັກແຫຼ່ງ, ຜູ້ມີອິດທິພົນ, ຊົນເຜົ່າ, ເພດ... ແນະນຳແນວລາວສ້າງຊາດຂັ້ນທ້ອງຖິ່ນຈັດຕັ້ງປະຕິບັດການເກັບກຳຕົວຈິງ;
- ຄົ້ນຄວ້າ, ວິໄຈ, ເຜີຍແຜ່ ແລະ ສະໜອງຂໍ້ມູນໃນຂອບເຂດຄວາມຮັບຜິດຊອບໃຫ້ພາກສ່ວນກ່ຽວຂ້ອງ;
- ປະສານສົມທົບພາກສ່ວນທີ່ກ່ຽວຂ້ອງເພື່ອສຳຫຼວດ, ຄົ້ນຄວ້າ ແລະ ສັງລວມກ່ຽວກັບແຫຼ່ງກຳເນີດ, ປະຫວັດສາດ, ການພັດທະນາ ແລະ ການຂຶ້ນທະບຽນເອກະລັກຕ່າງໆຂອງຊົນເຜົ່າ.

7.) **ວຽກງານປຸກລະດົມ, ຂົນຂວາຍ ແລະ ໂຄສະນາສຶກສາອົບຮົມ.**

- ໂຄສະນາສຶກສາອົບຮົມ ເພີ່ມທະວີຮັດແໜ້ນຄວາມສາມັກຄີປອງດອງຊາດເອກະພາບລະຫວ່າງຊົນເຜົ່າ, ຜູ້ຊົງຄຸນວຸດທິ, ຜູ້ເປັນຄົນທຸງ, ຜູ້ເປັນຫຼັກແຫຼ່ງ...
- ລົງເລິກໃກ້ຊິດຕິດແທດ, ເປັນເຈົ້າການເຂົ້າຮ່ວມ ແລະ ແນະນຳການເຮັດພິທີບຸນຮີດຄອງປະເພນີຂອງບັນດາຊົນເຜົ່າ ໂດຍສົມທົບກັບອົງການແນວລາວສ້າງຊາດຂັ້ນທ້ອງຖິ່ນ;
-ສົມທົບພາກສ່ວນກ່ຽວຂ້ອງນຳເອົາແນວທາງ, ແຜນນະໂຍບາຍສາມັກຄີປອງດອງຊາດ ແລະ ວຽກງານຊົນເຜົ່າຂອງພັກ, ນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ລົງໂຄສະນາເຜີຍແຜ່ໃຫ້ຊົນເຜົ່າຮັບຮູ້ເຂົ້າໃຈເປັນເອກະພາບ;
- ຂົນຂວາຍ, ປຸກລະດົມ ແລະ ຊຸກຍູ້ຊົນເຜົ່າເຂົ້າຮ່ວມປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ, ປະກອບສ່ວນຊ່ວຍເຫຼືອສັງຄົມ ແລະ ມະນຸດສະທຳ.

8.) **ວຽກງານປົກປ້ອງ ແລະ ສົ່ງເສີມ ສິດຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ.**

- ຕິດຕາມການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ນະໂຍບາຍ, ກົດໝາຍ ແລະ ຜົນກະທົບຈາກໂຄງການພັດທະນາເສດຖະກິດ-ສັງຄົມຂອງລັດຕໍ່ຊົນເຜົ່າ, ປະກອບຄຳເຫັນຕໍ່ພັກ-ລັດ, ອົງການທີ່ກ່ຽວຂ້ອງພິຈາລະນາປັບປຸງແກ້ໄຂ ເພື່ອໃຫ້ຮັບປະກັນຄວາມສະເໝີພາບ ແລະ ຍຸຕິທຳ;
- ສະເໜີ, ແນະນຳ ແລະ ໃຫ້ຄຳປຶກສາໃນການປົກປັກຮັກສາ ແລະ ເສີມຂະຫຍາຍເອກະລັກວັດທະນະທຳ, ຮີດຄອງ, ປະເພນີອັນດີງາມຂອງຊາດ ແລະ ຂອງຊົນເຜົ່າ, ແນະນຳ ແກ້ໄຂຮີດຄອງປະເພນີທີ່ບໍ່ສອດຄ່ອງ;
- ສົມທົບພາກສ່ວນກ່ຽວຂ້ອງຄົ້ນຄວ້າພິຈາລະນາການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊົນເຜົ່າທີ່ຖືກກະທົບ ເພື່ອຮັບປະກັນຄວາມສະເໝີພາບລະຫວ່າງຊົນເຜົ່າ.

9.) **ວຽກງານສະຫຼຸບ-ລາຍງານ ແລະ ກອງປະຊຸມ.**

- ສະຫຼຸບ, ສັງລວມ, ສ່ອງແສງລາຍງານສະພາບການ ແລະ ການເຄື່ອນໄຫວວຽກງານຊົນເຜົ່າ ໃນຂອບເຂດທົ່ວປະເທດໃຫ້ພັກ, ສະພາແຫ່ງຊາດ, ລັດຖະບານ ແລະ ພາກສ່ວນກ່ຽວຂ້ອງ ຫຼື ຕາມການຊີ້ນຳແຕ່ລະໄລຍະຂອງຄະນະກຳມະການສູນກາງແນວລາວສ້າງຊາດ;
- ປະສານສົມທົບພາກສ່ວນກ່ຽວຂ້ອງ ເພື່ອສະເຫນີຈັດກອງປະຊຸມປຶກສາຫາລືກ່ຽວກັບຊົນເຜົ່າ, ກອງປະຊຸມພົບປະຕົວແທນຊົນເຜົ່າ, ກອງປະຊຸມຜູ້ເປັນຄົນທຸງ, ຜູ້ເປັນຫຼັກແຫຼ່ງ, ຜູ້ມີອິດທິພົນ... ໃນຂອບເຂດທົ່ວປະເທດ, ຂັ້ນທ້ອງຖິ່ນ, ເປັນພາກ ຫຼື ຕາມຂອບເຂດຄວາມຕ້ອງການ.

**1.2. ວຽກງານສາສະໜາ.**

**1.) ວຽກງານຍຸດທະສາດ ແລະ ແຜນການ.**

- ເປັນເສນາທິການໃຫ້ແກ່ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ, ສຳລັບຢູ່ຂັ້ນທ້ອງຖິ່ນ ແນວລາວສ້າງຊາດແຂວງ ແມ່ນເປັນເສນາທິການໃຫ້ແກ່ຄະນະປະຈຳພັກແຂວງ, ແນວລາວສ້າງຊາດເມືອງເປັນເສນາທິການໃຫ້ແກ່ຄະນະປະຈຳພັກເມືອງ ແລະ ແນວລາວສ້າງຊາດບ້ານເປັນເປັນເສນາທິການໃຫ້ແກ່ເລຂາພັກບ້ານ ກ່ຽວກັບວຽກງານສາສະໜາ;
- ປະຕິບັດພາລະຫນ້າທີ່ອື່ນໆຕາມພາລະບົດບາດ, ສິດ ແລະ ຫນ້າທີ່ຂອງຕົນທີ່ໄດ້ກຳນົດໄວ້ໃນກົດຫມາຍວ່າດ້ວຍແນວລາວສ້າງຊາດ, ດຳລັດວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ຢູ່ ສປປ ລາວ, ການປະສານສົມທົບແລະ ການຕົກລົງມອບຫມາຍຂອງຂັ້ນເທິງ.

**2.) ວຽກງານນິຕິກຳ.**

-ເຂົ້າຮ່ວມ ແລະ ປະກອບສ່ວນໃນການສ້າງນະໂຍບາຍ ແລະ ນິຕິກຳຕ່າງໆກ່ຽວກັບວຽກງານສາສະໜາ, ບົດລາຍງານແຫ່ງຊາດ ແລະ ສົນທິສັນຍາສາກົນທີ່ພົວພັນເຖິງບັນຫາສາສະໜາ, ຕິດຕາມກວດກາການຈັດຕັ້ງປະຕິບັດແນວທາງນະໂຍບາຍ ແລະ ລະບຽບ-ກົດຫມາຍຂອງອົງການບໍລິຫານລັດ, ການຈັດຕັ້ງສາສະໜາ ແລະ ສາສະນິກະຊົນ ຕໍ່ວຽກງານສາສະໜາ, ປະສານສົມທົບກັບອົງການປົກຄອງຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການປຶກສາຫາລື ແລະ ແກ້ໄຂ ໄກ່ເກ່ຍບັນຫາຂໍ້ຂັດແຍ່ງກ່ຽວກັບສາສະໜາ.

**3.) ວຽກງານຄົ້ນຄວ້າອະນຸມັດ ຫຼື ອະນຸຍາດ.**

- ຄົ້ນຄວ້າ ແລະ ມີຄຳເຫັນແນະນຳຕໍ່ເອກະສານສະເຫນີຂອງສາສະໜາ, ສາສະນິກະຊົນ ໃນການສະເຫນີສ້າງຕັ້ງສາສະນະສະຖານ, ການເຄື່ອນໄຫວກິດຈະກຳ, ພິທີກຳ, ງານບຸນກິນທານທາງສາສະໜາທັງພາຍໃນ ແລະ ຕ່າງປະເທດ ເພື່ອສະເຫນີໃຫ້ກະຊວງພາຍໃນອະນຸມັດຕາມລະບຽບຫຼັກການ;

- ຄົ້ນຄວ້າເອກະສານ, ຄູ່ມືເພື່ອສຶກສາອົບຮົມໃຫ້ການຈັດຕັ້ງສາສະໜາ ແລະ ສາສະນິກະຊົນ, ເອກະສານຝຶກອົບຮົມ, ສໍາມະນາວຽກງານສາສະໜາໃຫ້ແກ່ພະນັກງານແນວລາວສ້າງຊາດ ແລະ ອົງການກ່ຽວຂ້ອງ.

**4.) ວຽກງານຮ່ວມມື.**

- ເສີມຂະຫຍາຍສິດເປັນເຈົ້າ, ນໍ້າໃຈຮັກຊາດ-ຮັກລະບອບໃໝ່, ປົກປັກຮັກສາວັດທະນະທໍາ ແລະ ຮີດຄອງປະເພນີອັນດີງາມ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງບັນດາການຈັດຕັ້ງສາສະໜາ ແລະ ສາສະນິກະຊົນ, ຊຸກຍູ້ ແລະ ເສີມຂະຫຍາຍການພົວພັນຮ່ວມມືສາກົນຂອງອົງການຈັດຕັ້ງສາສະໜາ;

- ປະສານສົມທົບກັບບັນດາການຈັດຕັ້ງຂອງພັກ, ຂອງລັດທີ່ກ່ຽວຂ້ອງ, ອົງການຈັດຕັ້ງສາສະໜາທັງພາຍໃນ ແລະ ຕ່າງປະເທດ ເພື່ອປຶກສາຫາລື, ແລກປ່ຽນຄວາມຄິດເຫັນໃນການຈັດຕັ້ງປະຕິບັດແນວທາງການຕ່າງປະເທດຂອງພັກ ໃນການພົວພັນດ້ານສາສະໜາກັບຕ່າງປະເທດ.

**5.) ວຽກງານຕິດຕາມກວດກາ**

- ລົງຮາກຖານເພື່ອເກັບກໍາຂໍ້ມູນ ແລະ ສະພາບກ່ຽວກັບສາສະໜາ, ເປັນຕົວແທນສ່ອງແສງຄວາມຄິດເຫັນ, ຄວາມມຸ່ງມາດປາຖະໜາ, ຂໍ້ສະເໜີຂອງສາສະໜາ ແລະ ສາສະນິກະຊົນ ເພື່ອສະເໜີຕໍ່ອົງການຈັດຕັ້ງກ່ຽວຂ້ອງຄົ້ນຄວ້າ, ແກ້ໄຂ.

**6.) ວຽກງານປຸກລະດົມ, ຂົນຂວາຍ ແລະ ໂຄສະນາສຶກສາອົບຮົມ**

- ສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ ແລະ ປຸກລະດົມຂົນຂວາຍການຈັດຕັ້ງສາສະໜາ, ນັກບວດ, ນັກສອນສາສະໜາ ແລະ ສາສະນິກະຊົນ ໃຫ້ມີຄວາມສາມັກຄີປອງດອງ, ມີຄວາມເຊື່ອໝັ້ນຕໍ່ແນວທາງນະໂຍບາຍຂອງພັກ, ເຄົາລົບ ແລະ ປະຕິບັດລະບຽບ-ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ, ປະກອບສ່ວນເຂົ້າໃນພາລະກິດປະຕິວັດປົກປັກຮັກສາ ແລະ ພັດທະນາປະເທດຊາດ; ປຸກລະດົມຂົນຂວາຍການຈັດຕັ້ງສາສະໜາ ແລະ ສາສະນິກະຊົນໃນການປະກອບສ່ວນຊ່ວຍເຫຼືອສັງຄົມ ແລະ ມະນຸດສະທໍາ;

- ໂຄສະນາຕ້ານ ແລະ ສະກັດກັ້ນທຸກຖ້ອຍທໍານອງໂຄສະນາບິດເບືອນ ແລະ ໃສ່ຮ້າຍປ້າຍສີຂອງອິດທິກໍາລັງປໍລະປັກ ແລະ ພວກທີ່ບໍ່ຫວັງດີ ສວຍໃຊ້ສາສະໜາ;

- ນໍາເອົາແນວທາງນະໂຍບາຍຂອງພັກ, ລະບຽບ-ກົດໝາຍຂອງລັດໄປຈັດຕັ້ງເຜີຍແຜ່ໃຫ້ການຈັດຕັ້ງສາສະໜາ ແລະ ສາສະນິກະຊົນຮັບຮູ້ເຂົ້າໃຈ, ມີສະຕິຕື່ນຕົວປະຕິບັດພັນທະຂອງພົນລະເມືອງລາວ.

**1.3. ວຽກງານອົງການຈັດຕັ້ງທາງສັງຄົມ.**

**1) ວຽກງານຍຸດທະສາດ**

- ຄົ້ນຄວ້າຫັນແນວທາງ ແລະ ແຜນນະໂຍບາຍຂອງພັກ-ລັດ ມາເປັນແຜນຍຸດທະສາດ, ແຜນງານ, ໂຄງການ, ບົດແນະນຳ ແລະ ເອກະສານຄູ່ມືສຶກສາອົບຮົມເຕົ້າໂຮມຄວາມສາມັກຄີບັນດາການຈັດຕັ້ງທາງສັງຄົມ;
- ສົມທົບກັບກະຊວງພາຍໃນ ໃນການເກັບກຳທຸກການຈັດຕັ້ງທາງສັງຄົມ (ດ້ານການຈັດຕັ້ງ, ອຸດົມການ, ການເຄື່ອນໄຫວ, ແຫຼ່ງງົບປະມານ, ການພົວພັນ ...);
- ເຕົ້າໂຮມ ແລະ ສຶກສາອົບຮົມສ້າງຄວາມສາມັກຄີປອງດອງຕາມແນວທາງຂອງພັກ-ລັດ;
- ແນວລາວສ້າງຊາດຂັ້ນທ້ອງຖິ່ນຄົ້ນຄວ້າຫັນແຜນຍຸດທະສາດ, ແຜນງານ, ແຜນການຂອງຂັ້ນເທິງ, ມະຕິ ແລະ ທິດຊີ້ນຳຂອງອົງຄະນະພັກຂັ້ນຂອງຕົນມາເປັນວຽກງານລະອຽດ ເພື່ອສຶກສາອົບຮົມເຕົ້າໂຮມ ຄວາມສາມັກຄີບັນດາການຈັດຕັ້ງທາງສັງຄົມໃນຂົງເຂດຄວາມຮັບຜິດຊອບຂອງຕົນ.

2) ວຽກງານນິຕິກຳ.

- ເຂົ້າຮ່ວມໃນການຄົ້ນຄວ້າສ້າງ ແລະ ປັບປຸງລະບຽບການ, ລະບຽບ-ກົດໝາຍກ່ຽວກັບການຄຸ້ມຄອງການຈັດຕັ້ງທາງສັງຄົມ;
- ຫັນເອົານິຕິກຳ ແລະ ລະບຽບການຕ່າງໆທີ່ຂັ້ນເທິງວາງອອກມາເປັນນິຕິກຳຂັ້ນຂອງຕົນໃຫ້ລະອຽດແທດເໝາະກັບຈຸດພິເສດແຕ່ລະທ້ອງຖິ່ນ ແລະ ແຕ່ລະເປົ້າໝາຍ, ພ້ອມທັງຈັດຕັ້ງເຜີຍແຜ່ບັນດານິຕິກຳດັ່ງກ່າວ;
- ແນວລາວສ້າງຊາດ ຊ່ວຍໃຫ້ການແນະນຳການຈັດຕັ້ງທາງສັງຄົມ ໃນການສ້າງກົດລະບຽບ, ໂຄງການເຄື່ອນໄຫວຂອງອົງການຕົນເອງໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລະບຽບ-ກົດໝາຍຂອງລັດ ແລະ ສະພາບເງື່ອນໄຂຕົວຈິງໃນແຕ່ລະໄລຍະ.

3) ວຽກງານຄົ້ນຄວ້າກຳນົດມາດຕະຖານ.

- ເຂົ້າຮ່ວມໃນການຄົ້ນຄ້ວາການກຳນົດມາດຕະຖານກ່ຽວກັບການຈັດຕັ້ງສັງຄົມ ແລະ ແນະນຳບຸກຄະລາກອນຂອງການຈັດຕັ້ງທາງສັງຄົມໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ;
- ແນວລາວສ້າງຊາດຂັ້ນທ້ອງຖິ່ນເຊື່ອມຊຶມ, ເຜີຍແຜ່, ບັນດາມາດຕະຖານ ແລະ ຕິດຕາມການຈັດຕັ້ງປະຕິບັດບັນດາຂໍ້ກຳນົດຕ່າງໆທີ່ຂັ້ນເທິງວາງອອກໃຫ້ຖືກຕ້ອງ, ເຂັ້ມງວດ ແລະ ເອກະພາບຢູ່ໃນທ້ອງຖິ່ນຂອງຕົນ.

4) ວຽກງານຄົ້ນຄວ້າອະນຸມັດ ຫຼື ອະນຸຍາດສ້າງຕັ້ງ, ການໂຮມ, ການແຍກ ແລະ ການຍຸບເລີກ.

- ເຂົ້າຮ່ວມໃນການປະກອບຄຳຄິດ, ຄຳເຫັນຕໍ່ກັບການຄົ້ນຄວ້າພິຈາລະນາອະນຸມັດການໂຮມ, ການແຍກ, ການຍຸບເລີກ ແລະ ການຍ້ອງຍໍ ບັນດາອົງການຈັດຕັ້ງທາງສັງຄົມທີ່ຢູ່ໃນຂອບເຂດທົ່ວປະເທດ;

- ເຂົ້າຮ່ວມໃນການຄົ້ນຄວ້າ, ປະກອບຄໍາເຫັນຕໍ່ການສະເຫນີນໍາເຂົ້າສື່ ແລະ ສິ່ງພິມ, ການພິມປື້ມ, ເອກະສານ, ປ້າຍ, ການກໍານົດເຄື່ອງຫມາຍສັນຍະລັກຕ່າງໆ ແລະ ກາປະທັບຂອງການຈັດຕັ້ງທາງສັງຄົມ.

5) ວຽກງານຮ່ວມມືສາກົນ.

- ມີສ່ວນຮ່ວມໃນການພົວພັນຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນເພື່ອດຶງດູດ ແລະ ຍາດແຍ່ງເອົາການຊ່ວຍເຫຼືອ ດ້ານທຶນຮອນ, ເຕັກນິກທາງດ້ານວິຊາການເຂົ້າໃນວຽກງານການຄົ້ນຄວ້າ, ສຶກສາອົບຮົມ, ແນະນໍາ, ຊຸກຍູ້ບັນດາການຈັດຕັ້ງທາງສັງຄົມໃຫ້ມີການເຄື່ອນໄຫວຖືກຕ້ອງ ແລະ ສອດຄ່ອງກັບລະບຽບ
ກົດຫມາຍ, ເຮັດພັນທະຂອງຕົນທາງດ້ານສັງຄົມສົງເຄາະ ແລະ ອື່ນໆ;

- ເຂົ້າຮ່ວມໃນການເຊັນບົດບັນທຶກຊ່ວຍຈໍາ, ເຊັນສັນຍາການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ພ້ອມທັງຕິດຕາມການເຄື່ອນໄຫວ ແລະ ປັບປຸງຕາມຂອບເຂດສິດທີ່ໄດ້ຮັບການມອບຫມາຍ ຈາກພັກ - ລັດຖະບານ, ລາຍງານຂັ້ນເທິງຕາມສາຍຕັ້ງຂອງຕົນ ແລະ ພາກສ່ວນທີ່ກ່ຽວຂ້ອງ,

- ເຂົ້າຮ່ວມໃນການຄົ້ນຄວ້າວິທະຍາສາດ ກ່ຽວກັບວຽກງານການຈັດຕັ້ງທາງສັງຄົມທີ່ອົງການຈັດຕັ້ງສາກົນ ຫຼື ຕ່າງປະເທດຈັດຂຶ້ນ.

6) ວຽກງານຕິດຕາມ ແລະ ຊຸກຍູ້.

- ເຂົ້າຮ່ວມແນະນໍາ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍຂອງພັກ, ລະບຽບ-ກົດຫມາຍຂອງລັດ, ແຜນງານ ແລະ ໂຄງການຕ່າງໆຂອງບັນດາການຈັດຕັ້ງທາງສັງຄົມ.

7) ວຽກງານແກ້ໄຂຂໍ້ຂັດແຍ່ງ ແລະ ສະເຫນີ.

- ສົມທົບພາກສ່ວນກ່ຽວຂ້ອງ ແລະ ເຂົ້າຮ່ວມຄົ້ນຄວ້າ ແກ້ໄຂໄກ່ເກ່ຍຂໍ້ຂັດແຍ່ງດ້ານຕ່າງໆ, ສະພາບ, ປະກົດການຫຍໍ້ທໍ້ ແລະ ຄໍາສະເຫນີຂອງບັນດາການຈັດຕັ້ງທາງສັງຄົມ, ບຸກຄົນ ແລະ ນິຕິບຸກຄົນຢູ່ພາຍໃນ ແລະ ຕ່າງປະເທດ.

8) ວຽກງານຂໍ້ມູນຂ່າວສານ.

- ເກັບກໍາສະພາບແນວຄິດ, ຄວາມມຸ່ງມາດປາຖະຫນາຂອງບັນດາການຈັດຕັ້ງທາງສັງຄົມ ເພື່ອຄົ້ນຄວ້າ ແລະ ສະເຫນີໃຫ້ພາກສ່ວນກ່ຽວຂ້ອງ ແລະ ຂັ້ນເທິງພິຈາລະນາ ;

- ສ້າງຖານຂໍ້ມູນ, ແບບຟອມ ເພື່ອເກັບກໍາສະພາບ, ບັນຫາຕ່າງໆກ່ຽວກັບການຈັດຕັ້ງສັງຄົມ, ພ້ອມທັງແນະນໍາແນວລາວສ້າງຊາດຂັ້ນຕ່າງໆໃນການຈັດຕັ້ງປະຕິບັດຕົວຈິງ, ຕິດຕາມ ແລະ ປະເມີນຜົນການເຄື່ອນໄຫວຂອງການຈັດຕັ້ງສັງຄົມ;

- ຄົ້ນຄວ້າ, ວິໄຈສະພາບ, ບັນຫາ ແລະ ຂໍ້ມູນຕ່າງໆກ່ຽວກັບການຈັດຕັ້ງທາງສັງຄົມໃນຂອບເຂດຄວາມຮັບຜິດຊອບຂອງຕົນ, ພ້ອມທັງເຜີຍແຜ່ ແລະ ສະໜອງຂໍ້ມູນຂ່າວສານດັ່ງກ່າວໃຫ້ແກ່ການຈັດຕັ້ງຂອງຕົນຕາມສາຍຕັ້ງ, ສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງ.

໑) ວຽກງານສະຫຼຸບ-ລາຍງານ.

- ສະຫຼຸບ, ສັງລວມ, ສ່ອງແສງ ແລະ ລາຍງານສະພາບການເຄື່ອນໄຫວວຽກງານການຈັດຕັ້ງທາງສັງຄົມໃນຂອບເຂດຄວາມຮັບຜິດຊອບຂອງຕົນໃຫ້ແກ່ພາກສ່ວນກ່ຽວຂ້ອງຕາມລະບຽບຫຼັກການ ແລະ ຄວາມຮຽກຮ້ອງຕ້ອງການໃນແຕ່ລະໄລຍະ. ການແລກປ່ຽນປະສົບປະການ, ການປະຊຸມສໍາມະນາ, ຄົ້ນຄວ້າວິທະຍາສາດໃຫ້ພະນັກງານຜູ້ທີ່ຮັບຜິດຊອບວຽກງານຊົນເຜົ່າ ;

- ເຊັນບົດບັນທຶກຊ່ວຍຈໍາ, ສັນຍາຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນກ່ຽວກັບວຽກງານຊົນເຜົ່າ ເພື່ອຍາດແຍ່ງເອົາການຊ່ວຍເຫຼືອດ້ານທຶນຮອນ ແລະ ເຕັກນິກວິຊາການຕາມການອະນຸຍາດຂອງຂັ້ນເທິງ ;

- ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນງານ, ໂຄງການຊ່ວຍເຫຼືອຂອງສາກົນ,ຕ່າງປະເທດເພື່ອພັດທະນາດ້ານວຽກງານຊົນເຜົ່າ ຕາມການອະນຸຍາດຂອງຂັ້ນເທິງ ;

- ເຂົ້າຮ່ວມໃນການຄົ້ນຄວ້າວິທະຍາສາດ ກ່ຽວກັບດ້ານວຽກງານຊົນເຜົ່າທີ່ອົງການຈັດຕັ້ງສາກົນ ຫຼື ຕ່າງ ປະເທດຈັດຂຶ້ນ.

4.) ວຽກງານຕິດຕາມກວດກາ.

- ຄຸ້ມຄອງ, ຕິດຕາມ, ກວດກາການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍຂອງພັກ, ລະບຽບ-ກົດໝາຍ ຂອງລັດ ແລະ ແຜນງານ, ແຜນການ, ໂຄງການຕ່າງໆກ່ຽວກັບວຽກງານຊົນເຜົ່າ;

- ເປັນເຈົ້າການປະສານສົມທົບກັບແນວລາວສ້າງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງຕິດຕາມກວດກາການຈັດຕັ້ງປະຕິບັດນະໂຍບາຍກ່ຽວກັບວຽກງານຊົນເຜົ່າ ໂດຍສະເພາະແມ່ນນະໂຍບາຍກ່ຽວກັບພາສາ, ໜັງສື ແລະ ການອະນຸລັກວັດທະນະທໍາທີ່ເປັນເອກະລັກ ແລະ ເປັນມູນເຊື້ອອັນດີງາມຂອງຊາດ ແລະ ຂອງຊົນເຜົ່າ, ຮັບປະກັນການປະຕິບັດສິດສະເໝີພາບລະຫວ່າງຊົນເຜົ່າ.

5.) ວຽກງານແກ້ໄຂຂໍ້ຂັດແຍ່ງ ແລະ ຂໍ້ສະເໜີ.

- ເປັນເຈົ້າການປະສານສົມທົບກັບແນວລາວສ້າງຊາດ, ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງຄົ້ນຄວ້າແກ້ໄຂຂໍ້ຂັດແຍ່ງ ຫຼື ປະກົດການຫຍໍ້ທໍ້ຕ່າງໆກ່ຽວກັບຊົນເຜົ່າ ;

- ຄົ້ນຄວ້າ ແລະ ນໍາສະເໜີຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງພິຈາລະນາແກ້ໄຂຂໍ້ຂັດແຍ່ງ ຫຼື ຄໍາສະເໜີຂອງບຸກຄົນ, ນິຕິບຸກຄົນ ທີ່ພົວພັນເຖິງບັນຫາຊົນເຜົ່າຕາມລະບຽບກົດໝາຍ.

6.) ວຽກງານສະຖິຕິ ແລະ ສະໜອງຂໍ້ມູນຂ່າວສານ.

- ເປັນເຈົ້າການໃນການສ້າງແຜນການ, ກຳນົດຖານຂໍ້ມູນ, ສ້າງແບບຟອມເພື່ອເກັບກຳສະຖິຕິກ່ຽວກັບຊົນເຜົ່າໃນຂອບເຂດທົ່ວປະເທດ. ພ້ອມທັງແນະນຳຂະແໜງພາຍໃນທ້ອງຖິ່ນຈັດຕັ້ງປະຕິບັດຕົວຈິງ;
- ເຜີຍແຜ່ ແລະ ສະໜອງຂໍ້ມູນຂ່າວສານກ່ຽວກັບຊົນເຜົ່າ.
- ປະສານສົມທົບພາກສ່ວນທີ່ກ່ຽວຂ້ອງເພື່ອສຳຫຼວດ, ຄົ້ນຄວ້າ ແລະ ສັງລວມກ່ຽວກັບແຫຼ່ງກຳເນີດ, ປະຫວັດສາດ, ການພັດທະນາ ແລະ ອື່ນໆ ຂອງຊົນເຜົ່າໃນລາວ;
- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລະ ນຳສະເໜີຂັ້ນເທິງພິຈາລະນາຮັບຮອງ ຫຼື ຢັ້ງຢືນຜົນການສຶກສາສິ່ງແວດລ້ອມດ້ານສັງຄົມໂດຍສະເພາະທີ່ກ່ຽວຂ້ອງດ້ານຊົນເຜົ່າ.
7.) ວຽກງານສະຫຼຸບ-ລາຍງານ.
- ສະຫຼຸບ, ສັງລວມ ລາຍງານສະພາບການເຄື່ອນໄຫວວຽກງານຊົນເຜົ່າໃນຂອບເຂດທົ່ວປະເທດໃຫ້ລັດຖະບານຢ່າງເປັນປົກກະຕິປີລະເທື່ອ ຫຼື ຕາມການຊີ້ນຳຂອງຂັ້ນເທິງ.
2.2. ວຽກງານສາສະໜາ.
1.) ວຽກງານຍຸດທະສາດ ແລະ ແຜນການ.
- ຄົ້ນຄວ້າຫັນເອົາແນວທາງນະໂຍບາຍຂອງພັກ-ລັດ ມາເປັນຮ່າງແຜນຍຸດທະສາດ, ນຳໄປທາບທາມຄຳຄິດຄຳເຫັນ ແລະ ນຳສະເໜີລັດຖະບານພິຈາລະນາຮັບຮອງພ້ອມທັງນຳໄປເຜີຍແຜ່, ແນະນຳຈັດຕັ້ງປະຕິບັດ ພາຍຫຼັງລັດຖະບານໄດ້ຮັບຮອງແລ້ວ ;
- ຂະແໜງການພາຍໃນຂັ້ນທ້ອງຖິ່ນຫັນເອົາຍຸດທະສາດມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ເພື່ອຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ.
2.) ວຽກງານນິຕິກຳ.
- ຄົ້ນຄວ້າສ້າງ, ປັບປຸງ, ເຜີຍແຜ່, ແນະນຳຈັດຕັ້ງປະຕິບັດບັນດານິຕິກຳ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງ ;
- ຂະແໜງການພາຍໃນຂັ້ນທ້ອງຖິ່ນຫັນເອົານິຕິກຳ ແລະ ລະບຽບການຕ່າງໆ ທີ່ຂັ້ນເທິງວາງອອກມາເປັນນິຕິກຳຂັ້ນຂອງຕົນໃຫ້ລະອຽດແທດເໝາະກັບສະພາບຈຸດພິເສດຂອງທ້ອງຖິ່ນຕົນ. ຈັດຕັ້ງເຜີຍແຜ່, ແນະນຳປະຕິບັດບັນດານິຕິກຳທີ່ຂັ້ນເທິງ ແລະ ຂັ້ນຂອງຕົນວາງອອກ.
3.) ວຽກງານຄົ້ນຄວ້າກຳນົດມາດຕະຖານ.
- ຄົ້ນຄວ້າກຳນົດມາດຕະຖານ, ເງື່ອນໄຂຂອງການຈັດຕັ້ງ, ກົດລະບຽບ, ໂຄງປະກອບການຈັດຕັ້ງ, ບຸກຄະລາກອນ ແລະ ສາສະນະສະຖານບົນພື້ນຖານການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງພ້ອມທັງເຜີຍແຜ່, ແນະນຳປະຕິບັດ ;
- ຂະແໜງພາຍໃນຂັ້ນທ້ອງຖິ່ນເຜີຍແຜ່, ເຊື່ອມຊຶມຈັດຕັ້ງປະຕິບັດບັນດາມາດຕະຖານ, ເງື່ອນໄຂທີ່ຂັ້ນເທິງວາງອອກໃຫ້ຖືກຕ້ອງ, ເຂັ້ມງວດ ແລະ ເອກະພາບຢູ່ພາຍໃນທ້ອງຖິ່ນຂອງຕົນ.

4.) ວຽກງານຄົ້ນຄວ້າອະນຸມັດ ຫຼື ອະນຸຍາດ.

- ເປັນເຈົ້າການຄົ້ນຄວ້າພິຈາລະນາອະນຸມັດ ຫຼື ປະຕິເສດການອະນຸມັດການສ້າງຕັ້ງ, ການໂຮມ, ການແຍກ ແລະ ການຍຸບເລີກການຈັດຕັ້ງສາສະໜາທີ່ເຄື່ອນໄຫວກວມເອົາຫຼາຍແຂວງ;
- ຄົ້ນຄວ້າ, ກວດຜ່ານ, ຮັບຮອງ ຫຼື ສະເໜີຂັ້ນເທິງຮັບຮອງທຳມະນູນ ຫຼື ກົດລະບຽບຂອງອົງການຈັດຕັ້ງສາສະໜາທີ່ເຄື່ອນໄຫວກວມເອົາຫຼາຍແຂວງ;
- ຄົ້ນຄວ້າ, ກວດຜ່ານ ແລະ ສະເໜີນາຍົກລັດຖະມົນຕີ ພິຈາລະນາອະນຸມັດການກໍ່ສ້າງພັດທະສີມາ ;
- ອະນຸຍາດການກໍ່ສ້າງ ແລະ ບູລະນະປະຕິສັງຂອນ ສາສະນະສະຖານເຊັ່ນ: ວັດ, ໂບດ, ຫໍທຳມະສະພາ ແລະ ສຸເຫຼົ່າ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນ;
- ຄົ້ນຄວ້າກ່ຽວກັບການອອກອະນຸຍາດໃຫ້ແກ່ນັກບວດ, ນັກສອນສາສະໜາຂອງບັນດາການຈັດຕັ້ງສາສະໜາໄປເຄື່ອນໄຫວສາສະໜາກິດ, ສຶກສາຮໍ່າຮຽນ, ຍົກລະດັບຢູ່ຕ່າງປະເທດ ແລະ ອະນຸຍາດໃຫ້ນັກບວດ, ນັກສອນສາສະໜາຂອງບັນດາການຈັດຕັ້ງສາສະໜາຕ່າງປະເທດມາເຄື່ອນໄຫວສາສະນະກິດຢູ່ ສປປ ລາວບົນພື້ນຖານການປະສານສົມທົບກັບແນວລາວສ້າງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ;
- ຂະແໜງການພາຍໃນຂັ້ນທ້ອງຖິ່ນ ຄົ້ນຄວ້າກວດຜ່ານ ແລະ ສະເໜີເຈົ້າແຂວງ, ເຈົ້າຄອງນະຄອນເພື່ອນຳສະເໜີລັດຖະມົນຕີກະຊວງພາຍໃນອະນຸຍາດການກໍ່ສ້າງ, ບູລະນະປະຕິສັງຂອນສາສະນະສະຖານ ບົນພື້ນຖານການປະສານສົມທົບກັບແນວລາວສ້າງຊາດ ແລະ ຂະແໜງການທີ່ກ່ຽວຂ້ອງ ;
- ຄົ້ນຄວ້າ, ມີຄຳເຫັນຕໍ່ການສະເໜີນຳເຂົ້າສື່ ແລະ ສິ່ງພິມ, ການພິມປື້ມ, ເອກະສານ, ປ້າຍ ແລະ ການກຳນົດເຄື່ອງໝາຍ-ສັນຍະລັກຕ່າງໆ ກ່ຽວກັບສາສະໜາກ່ອນຂະແໜງການກ່ຽວຂ້ອງອະນຸມັດ;
- ສັ່ງໂຈະ ຫຼື ຢຸດເຊົາການເຄື່ອນໄຫວຂອງນັກບວດ, ນັກສອນສາສະໜາ, ສາສະນິກະຊົນ ແລະ ການຈັດຕັ້ງສາສະໜາທີ່ບໍ່ສອດຄ່ອງກັບແນວທາງນະໂຍບາຍ, ຮີດຄອງປະເພນີ ແລະ ລະບຽບກົດໝາຍໃນຂອບເຂດທົ່ວປະເທດ ;-ຄົ້ນຄວ້າພິຈາລະນາການສະເໜີຂໍຈັດກອງປະຊຸມ, ງານບຸນ ແລະ ກິດຈະກຳອື່ນໆທາງສາສະໜາຂອງການຈັດຕັ້ງສາສະໜາທີ່ເຄື່ອນໄຫວກວມເອົາຫຼາຍແຂວງ;
-ຄົ້ນຄວ້າພິຈາລະນາກ່ຽວກັບການສະເໜີຂໍການຊ່ວຍເຫຼືອ ແລະ ຮັບເອົາການຊ່ວຍເຫຼືອຈາກບຸກຄົນ, ການຈັດຕັ້ງສາສະໜາ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດ;
- ຄົ້ນຄວ້າພິຈາລະນາການສະເໜີຂໍບວດ ແລະ ປະຕິບັດທຳຢູ່ ສປປ ລາວ ຂອງຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດບົນພື້ນຖານການເຫັນດີເປັນເອກະພາບຂອງທຸກພາກສ່ວນທີ່ກ່ຽວຂ້ອງ;

- ຄົ້ນຄວ້າພິຈາລະນາ ແລະ ມີຄໍາເຫັນຕໍ່ກັບການສະເໜີຂໍນໍາໃຊ້ຕາປະທັບຂອງການຈັດຕັ້ງສາສະໜາທີ່ເຄື່ອນໄຫວກວມເອົາຫຼາຍແຂວງກ່ອນກະຊວງປ້ອງກັນຄວາມສະຫງົບຈະຄວັດ ແລະ ອະນຸຍາດນໍາໃຊ້.

5.) ວຽກງານຮ່ວມມື.

- ພົວພັນຕ່າງປະເທດ, ອົງການຈັດຕັ້ງສາກົນກ່ຽວກັບການຄຸ້ມຄອງ -ບໍລິຫານລັດທາງດ້ານວຽກງານສາສະໜາເປັນຕົ້ນແມ່ນ : ການກໍ່ສ້າງ-ບໍາລຸງ-ຍົກລະດັບ, ການແລກປ່ຽນປະສົບການ, ການປະຊຸມສໍາມະນາ, ຄົ້ນຄວ້າວິທະຍາສາດ, ການດຶງດູດຍາດແຍ່ງເອົາການຊ່ວຍເຫຼືອດ້ານທຶນຮອນ ແລະ ເຕັກນິກວິຊາການ ;

- ເຊັນບົດບັນທຶກຊ່ວຍຈໍາ, ສັນຍາຮ່ວມມືກັບອົງການຈັດຕັ້ງສາກົນກ່ຽວກັບວຽກງານສາສະໜາຕາມການອະນຸຍາດຂອງຂັ້ນເທິງ;

- ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນງານ, ໂຄງການຊ່ວຍເຫຼືອຂອງສາກົນ, ຕ່າງປະເທດ ເພື່ອພັດທະນາວຽກງານສາສະໜາ ຕາມການອະນຸຍາດຂອງຂັ້ນເທິງ ;

- ເຂົ້າຮ່ວມໃນການຄົ້ນຄວ້າວິທະຍາສາດກ່ຽວກັບວຽກງານສາສະໜາທີ່ອົງການຈັດຕັ້ງສາກົນ ຫຼື ຕ່າງປະເທດຈັດຂຶ້ນ.

6.) ວຽກງານຕິດຕາມກວດກາ.

- ຄຸ້ມຄອງ, ຕິດຕາມ, ກວດກາບຸກຄົນ, ນິຕິບຸກຄົນ, ນັກບວດ, ນັກສອນສາສະໜາ, ສາສະນິກະຊົນ, ການຈັດຕັ້ງສາສະໜາ, ອົງການຈັດຕັ້ງຕ່າງໆທັງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວຢູ່ ສປປ ລາວ ໃນການປະຕິບັດແນວທາງ, ນະໂຍບາຍຂອງພັກ, ລະບຽບ-ກົດໝາຍຂອງລັດ, ກົດລະບຽບຂອງສາສະໜາ, ຮີດຄອງປະເພນີຂອງຊົນເຜົ່າ, ຂອງທ້ອງຖິ່ນ ແລະ ຂອງຊາດ ;

- ຕິດຕາມກວດກາເນື້ອໃນ, ຮູບການ, ວິທີການເຄື່ອນໄຫວທາງດ້ານສາສະໜາ, ຫຼັກສູດການຮຽນການສອນພະທໍາຄໍາສອນ ;

- ສົມທົບກັບກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງຕິດຕາມກວດກາລາຍຮັບ-ລາຍຈ່າຍຂອງການຈັດຕັ້ງສາສະໜາທີ່ເຄື່ອນໄຫວກວມເອົາຫຼາຍແຂວງ ;

- ຕິດຕາມກວດກາການກໍ່ສ້າງ, ບູລະນະປະຕິສັງຂອນ, ການທັບມ້າງ ຫຼື ການຍົກຍ້າຍສາສະນະວັດຖຸ, ສາສະນະສະຖານ, ການນໍາເຂົ້າ ແລະ ສົ່ງອອກສື່ສິ່ງພິມ, ສື່ອີເລັກໂຕຼນິກຂອງການຈັດຕັ້ງສາສະໜາຕ່າງໆ;

- ຕິດຕາມກວດກາການຂໍແຜ່ວັດຖຸ-ປັດໄຈ ດ້ວຍຮູບການຕ່າງໆເພື່ອສະກັດກັ້ນການສວຍໂອກາດຫາຜົນປະໂຫຍດທີ່ບໍ່ຊອບທໍາໃຫ້ແກ່ຕົນເອງເຊັ່ນ: ການແຈກຊອງແບບຊະຊາຍ, ການແຫ່ຕີຄ້ອງຮ້ອງປ່າວຕາມບ້ານເຮືອນ, ຕະຫຼາດ ແລະ ຖະໜົນຫົນທາງຕ່າງໆ ທັງໃນຕົວເມືອງ ແລະ ນອກເມືອງ.

7.) ວຽກງານແກ້ໄຂຂໍ້ຂັດແຍ່ງ ແລະ ຂໍ້ສະເໜີ

- ເປັນເຈົ້າການສະເໜີ ແລະ ປະສານສົມທົບກັບແນວລາວສ້າງຊາດ, ການຈັດຕັ້ງສາສະໜາ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຄົ້ນຄວ້າແກ້ໄຂຂໍ້ຂັດແຍ່ງ ຫຼື ປະກົດການຫຍໍ້ທໍ້ຕ່າງໆກ່ຽວກັບສາສະໜາທີ່ເກີດຂຶ້ນຈາກບຸກຄົນ, ນິຕິບຸກຄົນ, ນັກບວດ, ນັກສອນສາສະໜາ, ສາສະນິກະຊົນ, ການຈັດຕັ້ງສາສະໜາ, ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວຢູ່ ສປປ ລາວ;
- ເປັນເຈົ້າການປະສານສົມທົບກັບແນວລາວສ້າງຊາດ ແລະ ພາກສ່ວນຕ່າງໆຄົ້ນຄວ້າແກ້ໄຂຂໍ້ສະເໜີຂອງນັກບວດ, ນັກສອນສາສະໜາ, ສາສະນິກະຊົນ, ການຈັດຕັ້ງສາສະໜາທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງສາສະໜາ.

8.) ວຽກງານສະຖິຕິ ແລະ ສະໜອງຂໍ້ມູນຂ່າວສານ.

- ສ້າງແຜນການ, ກໍານົດຖານຂໍ້ມູນ, ສ້າງແບບຟອມ ເພື່ອເກັບກໍາສະຖິຕິນັກບວດ, ນັກສອນສາສະໜາ, ສາສະນິກະຊົນ, ການຈັດຕັ້ງສາສະໜາຕ່າງໆໃນຂອບເຂດທົ່ວປະເທດ. ພ້ອມທັງແນະນໍາຂະແໜງພາຍໃນຂັ້ນທ້ອງຖິ່ນຈັດຕັ້ງປະຕິບັດຕົວຈິງ ;
- ເຜີຍແຜ່ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບຈໍານວນສາສະໜາ, ນັກບວດ, ນັກສອນສາສະໜາ, ສາສະນິກະຊົນ, ການຈັດຕັ້ງສາສະໜາຕ່າງໆໃຫ້ແກ່ສັງຄົມ.

9.) ວຽກງານສະຫຼຸບ-ລາຍງານ.

- ສະຫຼຸບ, ສັງລວມ ລາຍງານສະພາບການເຄື່ອນໄຫວວຽກງານສາສະໜາໃນຂອບເຂດທົ່ວປະເທດໃຫ້ລັດຖະບານຢ່າງເປັນປົກກະຕິປີລະເທື່ອ ຫຼື ຕາມການຊີ້ນໍາຂອງຂັ້ນເທິງ.

2.3. ວຽກງານອົງການຈັດຕັ້ງສັງຄົມ

1.) ວຽກງານຍຸດທະສາດ ແລະ ແຜນການ.

- ເປັນເຈົ້າການຄົ້ນຄວ້າ, ຫັນເອົາແນວທາງນະໂຍບາຍຂອງພັກ-ລັດ ມາຮ່າງເປັນແຜນຍຸດທະສາດ, ນໍາໄປທາບທາມຄໍາຄິດຄໍາເຫັນນໍາສູນກາງແນວລາວສ້າງຊາດ ແລະ ກະຊວງ, ອົງການທີ່ກ່ຽວຂ້ອງກ່ອນນໍາສະເໜີລັດຖະບານພິຈາລະນາຮັບຮອງ ພ້ອມທັງນໍາໄປເຜີຍແຜ່, ແນະນໍາຈັດຕັງປະຕິບັດພາຍຫຼັງລັດຖະບານໄດ້ຮັບຮອງແລ້ວ;
- ຂະແໜງການພາຍໃນຂັ້ນທ້ອງຖິ່ນຫັນເອົາຍຸດທະສາດມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດເພື່ອຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ.

2.) ວຽກງານນິຕິກໍາ.

- ກະຊວງພາຍໃນຄົ້ນຄວ້າສ້າງ, ປັບປຸງ, ເຜີຍແຜ່, ແນະນໍາຈັດຕັ້ງປະຕິບັດບັນດານິຕິກໍາ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງກັບວຽກງານອົງການຈັດຕັ້ງສັງຄົມ;

- ຂະແໜງການພາຍໃນຂັ້ນທ້ອງຖິ່ນຫັນເອົານິຕິກຳ ແລະ ລະບຽບການຕ່າງໆທີ່ຂັ້ນເທິງວາງອອກມາເປັນນິຕິກຳຂັ້ນຂອງຕົນໃຫ້ລະອຽດແທດເໝາະກັບສະພາບຈຸດພິເສດຂອງທ້ອງຖິ່ນຕົນ. ຈັດຕັ້ງເຜີຍແຜ່, ແນະນຳປະຕິບັດບັນດານິຕິກຳທີ່ຂັ້ນເທິງ ແລະ ຂັ້ນຂອງຕົນວາງອອກ.

3.) ວຽກງານກຳນົດມາດຕະຖານ.

- ກະຊວງພາຍໃນຄົ້ນຄວ້າກຳນົດມາດຕະຖານ, ເງື່ອນໄຂຂອງການຈັດຕັ້ງ, ບຸກຄະລາກອນ ແລະ ສຳນັກງານຂອງການຈັດຕັ້ງສັງຄົມ ບົນພື້ນຖານການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງພ້ອມທັງເຜີຍແຜ່, ແນະນຳປະຕິບັດ;

- ຂະແໜງພາຍໃນທ້ອງຖິ່ນ ເຜີຍແຜ່, ເຊື່ອມຊຶມຈັດຕັ້ງປະຕິບັດບັນດາມາດຕະຖານ, ເງື່ອນໄຂທີ່ຂັ້ນເທິງວາງອອກໃຫ້ຖືກຕ້ອງ, ເຂັ້ມງວດ ແລະ ເອກະພາບຢູ່ໃນທ້ອງຖິ່ນຂອງຕົນ.

4.) ວຽກງານຄົ້ນຄວ້າ ຫຼື ອະນຸຍາດສ້າງຕັ້ງ, ການໂຮມ, ການແຍກ ແລະ ຍຸບເລີກ

- ກະຊວງພາຍໃນເປັນເຈົ້າການຄົ້ນຄວ້າພິຈາລະນາອະນຸມັດ ຫຼື ປະຕິເສດການອະນຸມັດສ້າງຕັ້ງ, ການໂຮມ, ການແຍກ ແລະ ການຍຸບເລີກອົງການຈັດຕັ້ງສັງຄົມທີ່ເຄື່ອນໄຫວກວມເອົາຫຼາຍແຂວງ;

- ກະຊວງພາຍໃນຄົ້ນຄວ້າ, ກວດກາຄວາມຖືກຕ້ອງຄົບຖ້ວນ, ຮັບຮອງທຳມະນູນ ຫຼື ກົດລະບຽບຂອງອົງການຈັດຕັ້ງສະມາຄົມຕ່າງໆທີ່ເຄື່ອນໄຫວກວມເອົາຫຼາຍແຂວງ;

- ກະຊວງພາຍໃນຄົ້ນຄວ້າກວດກາຄວາມຖືກຕ້ອງຄົບຖ້ວນ, ຮັບຮອງ ຫຼື ປະຕິເສດການຮັບຮອງບຸກຄະລາກອນ ທີ່ຈະປະກອບເຂົ້າເປັນຄະນະນຳຂອງການຈັດຕັ້ງສັງຄົມທີ່ເຄື່ອນໄຫວກວມເອົາຫຼາຍແຂວງໂດຍຜ່ານການຢັ້ງຢືນຂອງ ກະຊວງປ້ອງກັນຄວາມສະຫງົບ;

- ກະຊວງພາຍໃນຄົ້ນຄວ້າ, ກ່ຽວກັບການອອກໃບອະນຸຍາດ ໃຫ້ແກ່ບັນດາອົງການຈັດຕັ້ງສະມາຄົມໄປເຄື່ອນໄຫວຢູ່ຕ່າງປະເທດບົນພື້ນຖານປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

- ຂະແໜງພາຍໃນຂັ້ນແຂວງຄົ້ນຄວ້າກວດກາຄວາມຖືກຕ້ອງຄົບຖ້ວນ ແລະ ສະເໜີເຈົ້າແຂວງ, ເຈົ້າຄອງນະຄອນອະນຸຍາດສ້າງຕັ້ງ, ໂຮມ, ແຍກ ຫຼື ຍຸບເລີກອົງການຈັດຕັ້ງສັງຄົມທີ່ເຄື່ອນໄຫວສະເພາະແຕ່ຢູ່ໃນຂອບເຂດແຂວງຂອງຕົນບົນພື້ນຖານການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

- ຄົ້ນຄວ້າ, ມີຄຳເຫັນຕໍ່ການສະເໜີນຳເຂົ້າສື່ ແລະ ສິ່ງພິມ, ການພິມປຶ້ມ, ເອກະສານ, ປ້າຍ ແລະການກຳນົດເຄື່ອງໝາຍສັນຍະລັກຕ່າງໆກ່ຽວກັບອົງການຈັດຕັ້ງສັງຄົມກ່ອນຂະແໜງການກ່ຽວຂ້ອງອະນຸມັດ ;

- ສັ່ງໂຈະ ຫຼື ຢຸດເຊົາການເຄື່ອນໄຫວຂອງອົງການຈັດຕັ້ງສັງຄົມທີ່ບໍ່ສອດຄ່ອງກັບແນວທາງນະໂຍບາຍ, ຮີດຄອງປະເພນີ ແລະ ລະບຽບ-ກົດໝາຍໃນຂອບເຂດທົ່ວປະເທດ;

- ຄົ້ນຄວ້າພິຈາລະນາກ່ຽວກັບການສະເຫນີຂໍການຊ່ວຍເຫຼືອ ແລະ ຮັບເອົາການຊ່ວຍເຫຼືອຂອງອົງການຈັດຕັ້ງສັງຄົມຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຕ່າງໆທັງພາຍໃນ ແລະ ຕ່າງປະເທດ;
- ຄົ້ນຄວ້າພິຈາລະນາ ແລະ ມີຄໍາເຫັນຕໍ່ກັບການສະເຫນີຂໍນໍາໃຊ້ຕາປະທັບຂອງອົງການຈັດຕັ້ງສັງຄົມທີ່ເຄື່ອນໄຫວກວມເອົາຫຼາຍແຂວງ ກ່ອນກະຊວງປ້ອງກັນຄວາມສະຫງົບຈະຄົ້ວດ ແລະ ອະນຸຍາດນໍາໃຊ້.
5.) ວຽກງານຮ່ວມມືສາກົນ.
- ກະຊວງພາຍໃນພົວພັນຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນກ່ຽວກັບການຄຸ້ມຄອງ, ບໍລິຫານລັດດ້ານວຽກງານອົງການຈັດຕັງສັງຄົມ ເປັນຕົ້ນແມ່ນ: ການກໍ່ສ້າງ-ບໍາລຸງ-ຍົກລະດັບ, ການແລກປ່ຽນປະສົບປະການ, ການປະຊຸມສໍາມະນາຄົ້ນຄວ້າວິທະຍາສາດ, ການດຶງດູດຍາດແຍ່ງເອົາການຊ່ວຍເຫຼືອທາງດ້ານທຶນຮອນ ແລະ ເຕັກນິກວິຊາການ ;
- ເຊັນບົດບັນທຶກຊ່ວຍຈໍາ, ສັນຍາຮ່ວມມືກັບອົງການຈັດຕັ້ງສາກົນກ່ຽວກັບວຽກງານອົງການຈັດຕັ້ງສັງຄົມຕາມການອະນຸມັດຂອງຂັ້ນເທິງ ;ມຄອງ ແລະ ຈັດຕັ້ງປະຕິບັດແຜນງານ, ໂຄງການຊ່ວຍເຫຼືອຂອງສາກົນ, ຕ່າງປະເທດເພື່ອພັດທະນາດ້ານວຽກງານອົງການຈັດຕັ້ງສັງຄົມ ຕາມການອະນຸຍາດຂອງຂັ້ນເທິງ ;
- ເຂົ້າຮ່ວມໃນການຄົ້ນຄວ້າວິທະຍາສາດ ກ່ຽວກັບດ້ານວຽກງານອົງການຈັດຕັ້ງສັງຄົມທີ່ອົງການຈັດຕັ້ງສາກົນ ຫຼື ຕ່າງປະເທດຈັດຂຶ້ນ.
6.) ວຽກງານຕິດຕາມກວດກາ.
- ກະຊວງພາຍໃນຄຸ້ມຄອງ, ຕິດຕາມ, ກວດກາອົງການຈັດຕັ້ງສັງຄົມຕ່າງໆທີ່ເຄື່ອນໄຫວຢູ່ ສປປ ລາວໃນການປະຕິບັດແນວທາງ, ນະໂຍບາຍຂອງພັກ, ລະບຽບ-ກົດຫມາຍຂອງລັດ, ກົດລະບຽບຂອງສະມາຄົມ, ມູນນິທິ, ຮີດຄອງປະເພນີຂອງຊົນເຜົ່າ, ຂອງທ້ອງຖິ່ນ ແລະ ຂອງຊາດ ;
- ກະຊວງພາຍໃນ ສົມທົບກັບກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງຕິດຕາມກວດກາລາຍຮັບ
- ລາຍຈ່າຍຂອງອົງການຈັດຕັ້ງສັງຄົມທີ່ລົງເຄື່ອນໄຫວກວມເອົາຫຼາຍແຂວງ ;
- ກະຊວງພາຍໃນອະນຸຍາດ ແລະ ຕິດຕາມກວດກາ ການຮັບບໍລິຈາກຂອງສະມາຄົມ, ມູນນິທິ ເພື່ອສະກັດກັ້ນການສວຍໂອກາດຫາຜົນປະໂຫຍດທີ່ບໍ່ຊອບທໍາໃຫ້ແກ່ຕົນເອງ.
7.) ວຽກງານແກ້ໄຂຂໍ້ຂັດແຍ່ງ ແລະ ຂໍ້ສະເຫນີ
- ກະຊວງພາຍໃນ ເປັນເຈົ້າການປະສານສົມທົບກັບແນວລາວສ້າງຊາດ, ການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງຄົ້ນຄວ້າແກ້ໄຂຂໍ້ຂັດແຍ່ງ ຫລື ປະກົດການຫຍໍ້ທໍ້ຕ່າງໆກ່ຽວກັບການຈັດຕັ້ງສັງຄົມ ທີ່ເຄື່ອນໄຫວ ຢູ່ ສປປ ລາວ;

- ກະຊວງພາຍໃນ ເປັນເຈົ້າການປະສານສົມທົບກັບແນວລາວສ້າງຊາດ ແລະ ພາກສ່ວນຕ່າງໆ ຄົ້ນຄວ້າແກ້ໄຂຂໍ້ສະເໜີຂອງການຈັດຕັ້ງສັງຄົມ.

8.) ວຽກງານສະຖິຕິ ແລະ ສະໜອງຂໍ້ມູນຂ່າວສານ.

- ກະຊວງພາຍໃນສ້າງແຜນການ, ກຳນົດຖານຂໍ້ມູນ, ສ້າງແບບຟອມຕ່າງໆ ເພື່ອເກັບກຳສະຖິຕິກ່ຽວກັບອົງການຈັດຕັ້ງສັງຄົມຕ່າງໆໃນຂອບເຂດທົ່ວປະເທດພ້ອມທັງແນະນຳຂະແໜງພາຍໃນຂັ້ນທ້ອງຖິ່ນຈັດຕັ້ງປະຕິບັດຕົວຈິງ ;

- ເຜີຍແຜ່ ແລະ ສະໜອງຂໍ້ມູນຂ່າວສານກ່ຽວກັບຈຳນວນອົງການຈັດຕັ້ງສັງຄົມໃຫ້ແກ່ສູນກາງແນວລາວ ສ້າງຊາດ ແລະ ທົ່ວສັງຄົມຕາມລະບຽບການ.

9.) ວຽກງານສະຫຼຸບ-ລາຍງານ.

- ສະຫຼຸບ, ສັງລວມ ລາຍງານສະພາບການເຄື່ອນໄຫວວຽກງານການຈັດຕັ້ງສັງຄົມໃນຂອບເຂດທົ່ວປະເທດໃຫ້ລັດຖະບານຢ່າງເປັນປົກກະຕິປີລະເທື່ອ ຫຼື ຕາມການຊີ້ນຳຂອງຂັ້ນເທິງ.

III. ການຈັດຕັ້ງປະຕິບັດ.

1. ບັນດາກະຊວງ, ອົງການຈັດຕັ້ງຕ່າງໆ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ໃນຂອບເຂດທົ່ວປະເທດຈົ່ງຮັບຮູ້, ເຊື່ອມຊຶມ ແລະ ນຳພາຈັດຕັ້ງປະຕິບັດເນື້ອໃນຄຳແນະນຳສະບັບນີ້ໃຫ້ມີຜົນສຳເລັດ

2. ສູນກາງແນວລາວສ້າງຊາດ ແລະ ກະຊວງພາຍໃນ ນຳເອົາຄຳແນະນຳຮ່ວມສະບັບນີ້ ໄປຈັດຕັ້ງປະຕິບັດ ແລະ ເຜີຍແຜ່ລົງສູ່ທ້ອງຖິ່ນຮາກຖານ ເພື່ອໃຫ້ທຸກການຈັດຕັ້ງທີ່ກ່ຽວຂ້ອງ ແລະ ປະຊາຊົນລາວບັນດາເຜົ່າຮັບຮູ້ ແລະ ເຂົ້າໃຈຢ່າງກວ້າງຂວາງ, ເລີກເຊື່ອຕາມພາລະບົດບາດຂອງໃຜລາວ ;

3. ຜ່ານການຈັດຕັ້ງປະຕິບັດຕົວຈິງໃນກໍລະນີມີບາງບັນຫາທີ່ບໍ່ໄດ້ກຳນົດໄວ້ໃນຄຳແນະນຳສະບັບນີ້ ຫຼື ມີຂໍ້ຂັດແຍ່ງເກີດຂຶ້ນໃຫ້ສູນກາງແນວລາວສ້າງຊາດແລະ ກະຊວງພາຍໃນ ປຶກສາຫາລືກັນ ເພື່ອປັບປຸງແກ້ໄຂເພີ່ມຕື່ມ.

ທີ່ນະຄອນຫຼວງວຽງຈັນ, ວັນທີ 12 ມັງກອນ 2015

**ຕ ປະທານສູນກາງແນວລາວສ້າງຊາດ** **ລັດຖະມົນຕີວ່າການກະຊວງພາຍໃນ**

ຕົງ ເຢີທໍ່ ໄຊສີ ສັນຕິວົງ